International Training Program (ITP)

# On-site Education of Practical Languages for Area Studies

# Report in 2008

—Lao, National University of Laos, Laos, Term(11 May 2008 - 29 Sep. 2008)—

Year of Enrollment: 2006
Graduate School of Asian and African Area Studies
Shinichi Kawae

ຂ້ອຍຄົ້ນຄວ້າກ່ຽວກັບຢາງພາລາຢູ່ບ້ານຫາດຍາວ ແລະ ເກັບກຳຂໍ້ມູນແຕ່ລະຫຼັງຄາເຮືອນ.

ໃນປີ 1994 ບ້ານຫາດຍາວເລີ່ມປູກຕົ້ນຢາງພາລາ. ຄອບຄົວທີ່ຍ້າຍມາຈາກປະເທດຈີນເຄີຍເປັນກຳມະກອນປູກຕົ້ນຢາງພາລາໃຫ້ບໍລິສັດຈີນ. ພວກເຂົ້າໄດ້ແນະນຳວິທີປູກຕົ້ນຢາງພາລາ, ວິທີຮັກສາ ແລະ ປາດຢາງ. ນາຍບ້ານຫາດຍາວໄດ້ໄປຢືມເງິນຢູ່ຫ້ອງວ່າການປົກຄອງແຂວງຫຼວງນ້ຳທາ. ຫຼັງຈາກນັ້ນໄດ້ໄປຊື້ເບ້ຍຢາງພາລາຢູ່ປະເທດຈີນແລ້ວມາແບ່ງໃຫ້ແຕ່ລະຫຼັງຄາເຮືອນປູກ. ແຕ່ລະຫຼັງຄາເຮືອນຊ່ວຍກັນປູກຕົ້ນຢາງພາລາ.

ໃນປີ 1995 ຫົວໜ້າທະນາຄານສົ່ງເສີມກະສິກຳກຳແພງນະຄອນຫຼວງວຽງຈັນໄດ້ເອົາເງິນມາໃຫ້ປະຊາຊົນບ້ານຫາດຍາວຢືມເພື່ອປູກຕົ້ນຢາງພາລາ.

ໃນປີ 1997-2002 ບ້ານຫາດຍາວບໍ່ໄດ້ປູກຕົ້ນຢາງພາລາເພາະວ່າຍັງບໍ່ຮູ້ກ່ຽວກັບລາຄາຢາງ ແລະ ຍັງຮັກສາສວນຢາງພາລາທີ່ໄດ້ປູກໃນປີ 1994-1996.

ໃນປີ 2002 ປະຊາຊົນໄດ້ເລີ່ມປາດຢາງ ແລະ ເກັບກ່ຽວຢາງທີ່ໄດ້ປູກໃນປີ 1994. ໜ່ວຍເກັບຊື້ໄດ້ນຳເອົາຢາງໄປຂາຍຢູ່ປະເທດຈີນ.

ໃນປີ 2003 ປະຊາຊົນບ້ານຫາດຍາວເລີ່ມປູກຕົ້ນຢາງພາລາອີກ.

ໃນປີ 2005 ນາຍບ້ານຫາດຍາວໄດ້ແບ່ງດິນປູກຕົ້ນຢາງພາລາໃຫ້ບາງຄອບຄົວທີ່ຍັງບໍ່ມີສວນຢາງ

ພາລາພຽງພໍຢູ່ດິນເປົ້າຫວງ.

ສຳລັບການຂາຍຢາງ 2007-2008 ໄດ້ມີຫຼາຍບໍລິສັດມາຈາກປະເທດຈີນມາເກັບຊື້ຢາງຢູ່ບ້ານຫາດຍາວທຸກໆເດືອນ. ຖ້າບໍລິສັດໃດໃຫ້ລາຄາສູງ ແລະ ມີເອກະສານຄົບຖ້ວນ, ທາງບ້ານຫາດຍາວຈະຂາຍຢາງໃຫ້ບໍລິສັດນັ້ນ.

ໃນປີ 2009-2013 ນາຍບ້ານຫາດຍາວຈະບໍ່ອະນຸຍາດໃຫ້ປະຊາຊົນປູກຕົ້ນຢາງພາລາຕື່ມອີກເພາະວ່າປະຊາຊົນມີສວນຢາງພາລາພຽງພໍແລ້ວ ແລະ ໃຫ້ຮັກສາສວນຢາງພາລາທີ່ປູກຜ່ານມາ.



ການປາດຢາງ



ການຂາຍຢາງແຫ້ງ